# ຄວາມຮູ້ກ່ຽວກັບຮຸ້ນ ແລະ ການອອກຈຳໜ່າຍຮຸ້ນ

**ຂຽນໂດຍ: ທ່ານ ບົວລຳພູ ຄຳມະນີວົງ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

1. **ຮຸ້ນ ໝາຍເຖິງ** ທຶນຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນມີຖານະເປັນເຈົ້າຂອງບໍລິສັດ, ມີສິດ ແລະ ຜົນປະໂຫຍດ ຕາມອັດຕາສ່ວນຮຸ້ນທີ່ຕົນຖື;
2. **ຮຸ້ນກູ້ ໝາຍເຖິງ** ການກູ້ຢືມຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນກູ້ ມີຖານະເປັນເຈົ້າໜີ້ ຈະໄດ້ຮັບການຊຳລະຄືນ ທັງຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;
3. **ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໝາຍເຖິງ** ການອອກຈຳໜ່າຍຮຸ້ນ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນ ສະເພາະໃດໜຶ່ງ ຊຶ່ງມີຜູ່ລົງທຶນຫຼາຍກວ່າ ໜຶ່ງຮ້ອຍ ຂຶ້ນໄປ;
4. **ບໍລິສັດອອກຈຳໜ່າຍຮຸ້ນກູ້ ໝາຍເຖິງ** ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ;
5. **ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໝາຍເຖິງ** ການອອກຈຳໜ່າຍຮຸ້ນກູ້ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ ແລະ ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າ ໜຶ່ງຮ້ອຍລາຍ ຂຶ້ນໄປ.